# ບົດທີ 7

# ການສ້າງແບບວັດ ແລະ ປະເມີນອອນລາຍ

## 7.1 ການສ້າງແບບວັດການຮຽນຮູ້ດ້ວຍ Quizizz

### 7.1.1 ແນະນຳ Quizizz

Quizizz ເປັນເຄື່ອງມືອອນລາຍທີ່ຊ່ວຍໃຫ້ຜູ້ສອນສາມາດປະເມີນຜົນການຮຽນຂອງຜູ້ຮຽນໄດ້ຢ່າງມ່ວນຊື່ນ ແລະ ເຮັດໃຫ້ຜູ້ຮຽນມີສ່ວນຮ່ວມ, ຜູ້ຮຽນໄດ້ເຮັດແບບທົດສອບຜ່ານອຸປະກອນຄອມພິວເຕີທີ່ເຊື່ອມຕໍ່ລະບົບ Internet ແລະ ຜູ້ຮຽນຈະຮູ້ຜົນການທົດສອບໄດ້ທັນທີ, ຜູ້ສອນກໍ່ໄດ້ຮັບການລາຍງານຜົນການທົດສອບ ແລະ ບັນທຶກໃນເຄື່ອງຄອມພິວເຕີແບບອັດຕະໂນມັດ.

Quizizz ເໝາະກັບການນຳມາປະຍຸກໃຊ້ກັບການສ້າງຂໍ້ສອບກ່ອນການຮຽນ, ຫຼັງການຮຽນເພື່ອວັດຜົນການຮຽນຂອງຜູ້ຮຽນ ຫຼື ຈັດກິດຈະກຳການສອນແບບເກມເພື່ອເພີ່ມຄວາມມ່ວນຊື່ນໃນການຮຽນໄດ້ ນອກນີ້ຍັງຊ່ວຍໃຫ້ສະຖາບັນການສຶກສາປະຢັດຄ່າໃຊ້ຈ່າຍຈາກການກະກຽມອຸປະກອນການທົດສອບ ແລະ ເປັນການນຳເອົາເຕັກໂນໂລຊີມາໃຊ້ໃນການຮຽນ-ການສອນໃຫ້ເກີດປະໂຫຍດ ຊ່ວຍໃຫ້ຜູ້ສອນຫຼຸດເວລາໃນການສ້າງຂໍ້ສອບ, ຈັດແບບທົດສອບ ແລະ ຍັງໄດ້ຮັບຮູ້ເຖິງຈຸດບົກຜ່ອງການຮຽນຂອງຜູ້ຮຽນແຕ່ລະຄົນ ວ່ານັກຮຽນບໍ່ເຂົ້າໃຈເນື້ອໃນບົດຮຽນເລື່ອງໃດ ເພື່ອຜູ້ສອນຈະນຳເອົາຜົນຈາກການທົດສອບມາແກ້ໄຂຂະບວນການຈັດການຮຽນ-ການສອນໃຫ້ເໝາະສົມກັບຜູ້ຮຽນຫຼາຍຂຶ້ນ, ໃນດ້ານຂອງຜູ້ຮຽນເອງໄດ້ຮູ້ເຖິງຂໍ້ມູນວ່າຕົນເອງບໍ່ເຂົ້າໃຈບົດຮຽນຢູ່ຈຸດໃດ ເພື່ອເປັນການສ້າງແຮງຈູງໃຈໃນການຮຽນ ແລະ ໃຫ້ຜູ້ຮຽນຕ້ອງກະກຽມຄວາມພ້ອມໃນການຮຽນຕະຫຼອດເວລາ.

### 7.1.2 ການສ້າງແບບທົດສອບດ້ວຍ Quizizz

1) ເຂົ້າຫາເວັບ Quizizz ໂດຍການພິມ quizizz.com ເຂົ້າທີ່ເວັບບຣາວເຊີ
2) ຄຼິກທີ່ Log In ເພື່ອລົງທະບຽນເຂົ້າໃຊ້ງານເວັບ quizizz.com
3) ພິມທີ່ຢູ່ ແລະ ລະຫັດເພື່ອເຂົ້າໃຊ້ Quizzizz







4) ສະແດງໜ້າຕ່າງຂອງເວັບ Quizizz







5) ຖ້າຕ້ອງການສ້າງແບບທົດສອບໃຫ້ຄຼິກທີ່ Create

6) ເລືອກຄຳສັ່ງ Quiz

7) ພິມຊື່ບົດທົດສອບລົງໃນຫ້ອງ Name this Quiz

8) ເລືກສາຍວິຊາທີ່ກ່ຽວກັບແບບທົດສອບທີ່ເຮົາສ້າງໃນ Choose Relevant Subject

9) ຄຼິກ Next







10) ເລືອກຮູບແບບການສ້າງແບບທົດສອບຕາມທີ່ຕ້ອງການ (ຕົວຢ່າງເລືອກແບບ Multiple Choice)

11) ພິມຄຳຖາມເຂົ້າຫ້ອງ Write your question hear

12) ພິມຂະໜານຕອບມີ 4 ຕົວເລືອກແຕ່ສາມາດເລືອກຕອບໄດ້ພຽງຄຳຕອບດຽວເທົ່ານັ້ນ

13) ຄຼິກເຄື່ອງໝາຍຕິກ (✓) ໃສ່ຄຳຕອບທີ່ເຫັນວ່າຖືກຕ້ອງທີ່ສຸດ







14) ສາມາດກຳນົດເວລາໃຫ້ກັບຂໍ້ສອບຂໍ້ນັ້ນໄດ້ ຂຶ້ນກັບຄວາມຍາກງ່າຍຂອງຂໍ້ສອບ

15) ເມື່ອສຳເລັດທຸກຢ່າງແລ້ວຄຼິກທີ່ປຸ່ມ Save ເພື່ອບັນທຶກ







16) ສະແດງໜ້າຕ່າງຂອງການສ້າງຂໍ້ສອບໄດ້ສຳເລັດໃນຂໍ້ນັ້ນ ແຕ່ຖ້າຕ້ອງການເພີ່ມ ແລະ ແກ້ໄຂຂໍ້ສອບເພີ່ມຕື່ມແມ່ນເລືອກຄຳສັ່ງຕ່າງໆໄດ້.




(1) ຕ້ອງການເພີ່ມຂໍ້ສອບໃໝ່
(2) ຕ້ອງການແກ້ໄຂ
(3) ຕ້ອງການ Copy
(4) ຕ້ອງການລຶບຂໍ້ສອບ
(5) ເລືອກຮູບແບບຂໍ້ສອບຕາມທີ່ຕ້ອງການ

17) ສາມາດປ່ຽນຮູບພາບໃຫ້ກັບຊຸດຂໍ້ສອບເຮົາໄດ້

18) ຈາກນັ້ນກົດທີ Publish

19) ສະແດງໜ້າຕ່າງ Quiz Details ເພື່ອເພີ່ມລາຍລະອຽດໃຫ້ກັບຊຸດແບບທົດສອບ ແລະ ແມ່ນໃຜສາມາດເຂົ້າໃຊ້ໄດ້ແດ່.

20) ຈາກນັ້ນຄຼິກທີ່ Save







21) ເມື່ອສຳເລັດໃຫ້ຄຼິກທີ່ Start a live quiz ເພື່ອທົດສອບໃນເວລາປັດຈຸບັນໄດ້ເລີຍ

22) ສິ່ງເປັນລັກສະນະວຽກບ້ານໃຫ້ຜູ້ຮຽນກໍ່ໄດ້ເຊັ່ນກັນ






### 7.1.2 ການສ້າງບົດຮຽນນໍາສະເໜີດ້ວຍ Quizizz

Quizizz ໃຊ້ເຂົ້າໃນການທົດສອບຄວາມຮູ້ແລ້ວເຮົາຍັງສາມາດນໍາໃຊ້ Quizizz ໃນການສ້າງບົດຮຽນນໍາສະເໜີໂດຍມີການປະຕິສໍາພັນລະຫວ່າງຄູກັບຜູ້ຮຽນໃນຊ່ວງການຮຽນອີກຕື່ມ ເພື່ອເພີ່ມຄວາມສົນໃຈໃນການຕິດຕາມບົດຮຽນໄດ້ຫຼາຍຂຶ້ນ ສະນັ້ນເຮົາໄປເບິ່ງວິທີການສ້າງ ແລະ ການນໍາໃຊ້ດັ່ງຕໍ່ໄປນີ້:

1) ເຂົ້າຫາເວັບ Quizizz ໂດຍການພິມ quizizz.com ເຂົ້າທີ່ເວັບບຣາວເຊີ

2) ຄຼິກທີ່ Log In ເພື່ອລົງທະບຽນເຂົ້າໃຊ້ງານເວັບ quizizz.com

3) ພິມທີ່ຢູ່ ແລະ ລະຫັດເພື່ອເຂົ້າໃຊ້ Quizzizz







4) ເລືອກ Create ເພື່ອສ້າງບົດຮຽນ

5) ຄຼິກທີ່ New Lesson

6) ພິມຊື່ບົດຮຽນທີ່ຕ້ອງການນໍາສະເໜີ

7) ເລືອກລາຍວິຊາທີ່ສອດຄ່ອງກັບຊື່ຂອງບົດຮຽນ

8) ເມື່ອສໍາເລັດຄຼິກ Next ເພື່ອເຂົ້າໄປສ້າງບົດຮຽນ






9) ເລືອກຮູບແບບສີສັນຕາມທີ່ຕ້ອງການ

10) ຄຼິກທີ່ Next ເພື່ອເລີ່ມລົງມືສ້າງ

11) ສະແດງໜ້າຕາຂອງການສ້າງບົດຮຽນໃນຮູບແບບ Slide










ຈາກນັ້ນກໍ່ຕົບແຕ່ງອອກແບບບົດຮຽນທີ່ຕ້ອງການຈະສອນເມື່ອສຳເລັດແລ້ວໃຫ້ຄຼິກທີ່ປຸ່ມ Save ແຕ່ຖ້າຕ້ອງການເພີ່ມແບບທົດສອບໃນໄລຍະທີ່ນຳສະເໜີບົດຮຽນເພື່ອກະຕຸ້ນຜູ້ຮຽນໃຫ້ມາສົນໃຈບົດຮຽນ ເຮົາສາມາດເພີ່ມ Quizizz ເຂົ້າໄປໄດ້ໂດຍເລືອກທີ່ Add new slide

12) ຄຼິກທີ່ Add new slide

13) ເລືອກຮູບແບບຄຳຖາມ ເປັນຮູບແບບດຽວກັນກັບສ້າງແບບທົດສອບຂ້າງເທິງ

14) ພິມຫົວຂໍ້ຄຳຖາມ

15) ພິມຂະໜານຕອບພ້ອມທັງກຳນົດເວລາໃຫ້ກັບຄຳຖາມແຕ່ລະຂໍ້ຈາກນັ້ນກໍ່ບັນທຶກຖືວ່າສຳເລັດ










ເມື່ອສຳເລັດການສ້າງຄຳຖາມແລ້ວບັນທຶກ ຈາກນັ້ນກໍ່ສາມາດສົ່ງແບບທົດສອບນີ້ໄປຍັງໄປທົດສອບ ຫຼື ວັດຜົນການຮຽນຂອງຜູ້ຮຽນໄດ້ເລີຍ.

## ຕົວຢ່າງການສ້າງບົດຮຽນຜ່ານ Quizizz




## ຕົວຢ່າງການສ້າງບົດທົດສອບປະກອບການສອນຜ່ານ Quizizz



ເອກະສານອ້າງອີງ


http://human.skru.ac.th/file/Quizizz164.pdf

https://pubhtml5.com/byit/bdhu/basic

https://www.wikihow.com/Use-Quizizz

https://ciet.nic.in/upload/Tutorial%20Creating%20Quiz%20using%20Quizizz.pdf